ເງື່ອນໄຂຈຳນວນຄວາມຖີ່ໃນການສົ່ງຄຳສັ່ງຂອງ EA ແລະ ໂປຣແກຣມເທຣດອັດຕະໂນມັດ

ເພື່ອຮັກສາສະຖຽນລະພາບຂອງລະບົບການເທຣດ ແລະ ປະສິດທິພາບໃນການປະມວນຜົນຄຳສັ່ງ ບໍລິສັດຂໍຄວາມຮ່ວມມືຈາກລູກຄ້າທຸທ່ານທີ່ໃຊ້ງານ Expert Advisors (EA), Scripts ຫຼືໂປຣແກຣມເທຣດອັດຕະໂນມັດອື່ນໆໃນຊີເທຣດ ກະລຸນາປະຕິບັດຕາມຂໍ້ກຳນົດກ່ຽວກັບການຈຳກັດຄວາມຖີ່ໃນການສົ່ງຄຳສັ່ງ ພ້ອມທັງກວດສອບ ແລະ ປັບຕັ້ງຄ່າການໃຊ້ງານໃຫ້ສອດຄ່ອງກັບກັບຂໍກຳນົດດັ່ງກ່າວ

ຂອບເຂດການບັງຄັບໃຊ້ ແລະ ການນັບຈຳນວນຄຳສັ່ງ

ລະບົບຈະນັບຈຳນວນຄຳຂໍ (Requests) ທີ່ເຊີບເວີເທຣດໄດ້ຮັບຕ໊ອຈິງທັງໝົດ ເຊິ່ງລວມເຖິງຄຳສັ່ງເປີດ ຫຼື ປິດຄຳສັ່ງການຊື້ຂາຍ ການຕັ້ງຫຼືການຍົກເລີກຄຳສັ່ງຊື້ຂາຍລ່ວງໜ້າ (Pending Orders) ການແກ້ໄຂຄຳສັ່ງຊື້ຂາຍ ລວມເຖິງການຕັ້ງຄ່າຫຼືແກ້ໄຂ Stop Loss (SL) ແລະ Take Profit (TP) ໂດຍນັບລວມຄຳສັ່ງທີ່ຖືກປະຕິເສດ ຄຳສັ່ງທີ່ບໍ່ສາມາດດຳເນີນການໄດ້ ແລະ ຄຳສັ່ງທີ່ຖືກສົ່ງຊ້ຳກັນດ້ວຍ ເຖິງຢ່າງໃດກໍຕາມຄຳສັ່ງຈາກທຸກາເພລດຟອມ ແລະ ໂປຣແກຣມເທຣດອັດຕະໂນມັດທີ່ໃຊ້ງານພາຍໃຕ້ບັນຊີດຽວກັນຈະຖືກນັບລວມກັນ ໂດຍຈຳນວນຄຳສັ່ງໃນທີ່ນີ້ ບໍ່ແມ່ນຈຳນວນຄຳສັ່ງຊື້ຂາຍທີ່ດຳເນີນການສຳເລັດແລ້ວ ຫຼື ປະລິມານການຊື້ຂາຍ (Trading Volume)

ການນັບຈຳນວນຄຳສັ່ງຊື້ປະຈຳວັນແມ່ນອີງໃສ່ເວລາເຊີບເວີ MT4/5 ໂດຍລະບົບຈະຣີເຊັດຈຳນວນຄຳສັ່ງສະສົມທຸກມື້ ເວລາ 00:00 ໂມງຕາມເວລາເຊີບເວີ MT4/5

ການຈຳກັດຄວາມຖີ່ໃນການສົ່ງຄຳສັ່ງ

ຊ່ວງເວລາ	**ຈຳນວນການສົ່ງຄຳສັ່ງສູງສຸດ / ບັນຊີ**
ຕໍ່ວິນາທີ	ບໍ່ເກີນ 10 ຄຳສັ່ງຕໍ່ວິນາທີ
ຕໍ່ນາທີ	ບໍ່ເກີນ 20 ຄຳສັ່ງຕໍ່ນາທີ
ຕໍ່ວັນ	ບໍ່ເກີນ 10,000 ຄຳສັ່ງຕໍ່ວັນ

ຂໍ້ຈຳກັດທັງ 3 ຢ່າງຈະຖືກບັງຄັບໃຊ້ພ້ອມໆກັນ ໂດຍລູກຄ້າຕ້ອງບໍ່ສົ່ງຄຳຮ້ອງຂໍທີ່ບໍ່ຖືກຕ້ອງ ຫຼືຄຳສັ່ງຊ້ຳກັນເປັນຈຳນວນຫຼາຍຢ່າງຕໍ່ເນື່ອງ ເຖິງແມ່ນວ່າຈຳນວນຄຳຮ້ອງຂໍທັງໝົດຈະຍັງບໍ່ເກີນຂີດຈຳກັດທີ່ກຳນົດໄວ້ ແຕ່ຖ້າມີການສົ່ງຄຳສັ່ງທີ່ບໍ່ຖືກຕ້ອງຫຼາຍເກີນໄປຈົນສົ່ງຜົນໃຫ້ລະບົບຕ້ອງຮັບພາລະການປະມວນຜົນຢ່າງບໍ່ສົມເຫດສົມຜົນ ລູກຄ້າຈະຕ້ອງດຳເນີນການກວດສອບ ແລະ ແກ້ໄຂບັນຫາດັ່ງກ່າວເຊັ່ນກັນ

ການປັບປຸງນທີ່ຈຳເປັນ

ກະລຸນາຫຼຸດຄວາມຖີ່ໃນການສົ່ງຄຳສັ່ງຊື້ຂາຍ ການຍົກເລີກຄຳສັ່ງ ແລະການແກ້ໄຂຄຳສັ່ງຊື້ຂາຍ ລວມເຖິງຫຼີກລ່ຽງການສົ່ງຄຳຂໍແກ້ໄຂຊ້ຳໂດຍບໍ່ມີການປ່ຽນແປງຄ່າພາຣາມິເຕີໃດໆໃນກໍລະນີທີ່ເກີດຂໍ້ຜິດພາດ ເຊັ່ນ: ເງິນທຶນບໍ່ພຽງພໍ (Insufficient Funds) ຕະຫຼາດປິດທຳການ (Market Closure) ຫຼືການຕັ້ງຄ່າພາຣາມິເຕີບໍ່ຖືກຕ້ອງ (Invalid Parameters) ກະລຸນາຢຸດສົ່ງຄຳຂໍຊ້ຳຢ່າງຕໍ່ເນື່ອງ ແລະ ດຳເນີນການກວດສອບພ້ອມແກ້ໄຂສາເຫດຂອງຂໍ້ຜິດພາດກ່ອນສົ່ງຄຳຂໍໃໝ່

ນອກຈາກນີ້ ລູກຄ້າຄວນກຳນົດໄລຍະຫ່າງລະຫວ່າງການສົ່ງຄຳຂໍ (Request Intervals) ຈຳນວນຄັ້ງສູງສຸດໃນການສົ່ງຄຳຂໍຊ້ຳ (Retry Limits) ແລະກົນໄກການຢຸດເຮັດວຽກຊົ່ວຄາວ (Pause Mechanisms) ໃຫ້ເໝາະສົມ ພ້ອມທັງທົດສອບລະບົບໃຫ້ຮຽບຮ້ອຍກ່ອນໃຊ້ງານອີກຄັ້ງ

ມາດຕະການຈຳກັດການໃຊ້ງານ ແລະ ການກັບມາເປີດໃຊ້ງານອີກຄັ້ງ

ຫຼັງໄດ້ຮັບຄຳເຕືອນຫຼືມີການແຈ້ງໃຫ້ດຳເນີນການແກ້ໄຂ ລູກຄ້າຈະຕ້ອງລົດຄວາມຖີ່ໃນການສົ່ງຄຳສັ່ງໂດຍໄວທີ່ສຸດ ຫາກພົບວ່າມີການສົ່ງຄຳສັ່ງເກີນຂໍ້ຈຳກັດທີ່ກຳນົດຂໍ້ໃດຂໍ້ໜຶ່ງ ຍັງມີການສົ່ງຄຳສັ່ງທີ່ບໍ່ຖືກຕ້ອງໃນປະລິມາຫຼາຈຳນວນຕໍ່ເນື່ອງ ຫຼືຍັງຄົງມີການສົ່ງຄຳສັ່ງທີ່ຜິດປົກກະຕິຫຼັງພົ້ນໄລຍະເວລາທີ່ກຳນົດໃຫ້ແກ້ໄຂ ບໍລິສັດອາດຈະດຳເນີນມາດຕາການຈຳກັດຫຼືລະງັບສິດການໃຊ້ງານອີເອ EA ແລະ ໂປຣແກຣມເທຣດອັດຕະໂນມັດທີ່ກ່ຽວຂ້ອງໃນບັນຊີເທຣດຕາມຂໍ້ກຳນົດໃນຂໍ້ຕົກລົງລູກຄ້າ (Client Agreement) ທີ່ມີຜົນບັງຄັບໃຊ້

ໃນກໍລະນີທີ່ຄຳສັ່ງຜິດປົກກະຕິອາດສົ່ງຜົນໃຫ້ລະບົບເຮັດວຽກເກີນຂີດຄວາມສາມາດຂອງມັນ ຫຼືສ່ຽງຕໍ່ການຢຸດຊະງັກຂອງການໃຫ້ບໍລິການ ບໍລິສັດອາດດຳເນີນມາດຕາການທີ່ຈຳເປັນໄດ້ທັນທີຕາມຂອບເຂດຂໍ້ຕົກລົງທີ່ກ່ຽວຂ້ອງ ໂດຍຈະແຈ້ງເຫດຜົນ ແລະ ຂອບເຂດຂອງມາດຕາການຈຳກັດການໃຊ້ງານໃຫ້ລູກຄ້າຮັບຊາບໂດຍທັນທີ

ໃນລະຫວ່າງທີ່ບັນຊີຖືກຈຳກັດສິດການໃຊ້ງານ ລູກຄ້າຈະຕ້ອງບໍລິຫານຈັດການຄຳສັ່ງຊື້ຂາຍທີ່ເປີດຢູ່ ພ້ອມທັງກວດສອບຄຳສັ່ງຊື້ຂາຍລ່ວງໜ້າ (Pending Orders) ແລະການຕັ້ງຄ່າ Stop Loss (SL) ແລະ Take Profit (TP) ໃຫ້ຮຽບຮ້ອຍ ເມື່ອດຳເນີນການປັບຕັ້ງຄ່າຄຳສັ່ງ ແລະ ທົດສອບລະບົບຈົນສຳເລັດແລ້ວ ລູກຄ້າສາມາດສົ່ງຄຳຂໍເປີດໃຊ້ງານ EA ອີກຄັ້ງຜ່ານອີເມວ **support.th@fisg.com** ໂດຍລະບຸໝາຍເລກບັນຊີເທຣດ ລາຍລະອຽດການປັບແກ້ໄຂ ແລະ ໄຟລ໌ບັນທຶກການເຮັດວຽກຂອງລະບົບ (Logs) ທີ່ກ່ຽວຂ້ອງ ເຖິງຢ່າງໃດກໍຕາມ ບໍລິສັດຈະດຳເນີນການກວດສອບ ແລະ ແຈ້ງຜົນການພິຈາລະນາ ລວມເຖິງໄລຍະເວລາການກັບມາເປີດໃຊ້ງານຜ່ານທາງອີເມວ

ຫາກມີຂໍ້ສົງໃສກ່ຽວກັບການນັບຈຳນວນຄຳຂໍຫຼືມາດຕາການຈຳກັດການໃຊ້ງານສາມາດຕິດຕໍ່ຝ່າຍບໍລິການລູກຄ້າຜ່ານອີເມວຂ້າງເທິງໄດ້ເລີຍ ບໍລິສັດຂໍຂອບໃຈລູກຄ້າທຸກທ່ານ ສຳລັບຄວາມເຂົ້າໃຈ ແລະ ຄວາມຮ່ວມມື